# This document has been provided by the International Center for Not-for-Profit Law (ICNL).

ICNL is the leading source for information on the legal environment for civil society and public participation. Since 1992, ICNL has served as a resource to civil society leaders, government officials, and the donor community in over 90 countries.

Visit ICNL's **Online Library** at
http://www.icnl.org/knowledge/library/index.php
for further resources and research from countries all over the world.

Disclaimers

**Content.** The information provided herein is for general informational and educational purposes only. It is not intended and should not be construed to constitute legal advice. The information contained herein may not be applicable in all situations and may not, after the date of its presentation, even reflect the most current authority. Nothing contained herein should be relied or acted upon without the benefit of legal advice based upon the particular facts and circumstances presented, and nothing herein should be construed otherwise.

**Translations.** Translations by ICNL of any materials into other languages are intended solely as a convenience. Translation accuracy is not guaranteed nor implied. If any questions arise related to the accuracy of a translation, please refer to the original language official version of the document. Any discrepancies or differences created in the translation are not binding and have no legal effect for compliance or enforcement purposes.

**Warranty and Limitation of Liability.** Although ICNL uses reasonable efforts to include accurate and up-to-date information herein, ICNL makes no warranties or representations of any kind as to its accuracy, currency or completeness. You agree that access to and use of this document and the content thereof is at your own risk. ICNL disclaims all warranties of any kind, express or implied. Neither ICNL nor any party involved in creating, producing or delivering this document shall be liable for any damages whatsoever arising out of access to, use of or inability to use this document, or any errors or omissions in the content thereof.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 115 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 29 ເມສາ 2009

# ດຳລັດ

## ວ່າດ້ວຍສະມາຄົມ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສ.ປ.ປ. ລາວ ສະບັບລົງວັນທີ **06** ພຶດສະພາ **2003;**
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ **02**/ສພຊ, ລົງວັນທີ **06** ພຶດສະພາ **2003;**
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີ ປະຈຳ ສ.ນ.ຍ, ຫົວໜ້າຫະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ **53**/ທປຄ, ລົງວັນທີ **11** ເມສາ **2009**.

### ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:

### ພາກທີ I

### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດຫຼັກການ ແລະ ລະບຽບການຕ່າງໆ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະມາຄົມທີ່ມີຖານະນິຕິບຸກຄົນຢູ່ ສ.ປ.ປ. ລາວ, ຈຸດປະສົງເພື່ອ:

1. ສົ່ງເສີມສິດເສລີພາບ, ຫົວຄິດປະດິດສ້າງ ແລະ ສິດເປັນເຈົ້າຂອງພົນລະເມືອງລາວ ເຂົ້າໃນການຈັດຕັ້ງສະມາຄົມແນໃສ່ປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງ;
2. ເປັນບ່ອນອີງພື້ນຖານໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຢາກສ້າງຕັ້ງສະມາຄົມຂອງຕົນຂຶ້ນ;
3. ເປັນບ່ອນອີງໃຫ້ແກ່ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ອຳນວຍຄວາມສະດວກ ແລະ ຊຸກຍູ້ການເຄື່ອນໄຫວຂອງສະມາຄົມ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ສົ່ງເສີມ

ໃຫ້ສະມາຄົມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ. ພ້ອມກັນນັ້ນ, ກໍເພື່ອຕ້ານ ແລະ ສະກັດກັ້ນການເຄື່ອນໄຫວທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ.

ມາດຕາ 2. ນິຍາມ

- **ສະມາຄົມ** ແມ່ນການຈັດຕັ້ງທາງສັງຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈໍາ, ບໍ່ຫວັງຜົນກໍາໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ;
- **ສະມາຄົມທີ່ມີຖານະນິຕິບຸກຄົນ** ແມ່ນສະມາຄົມທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມດໍາລັດສະບັບນີ້, ເຄື່ອນໄຫວເປັນປະຈໍາ, ມີກົດລະບຽບ, ມີສໍານັກງານ, ມີຕາປະທັບ ແລະ ມີບັນຊີເງິນຝາກຢູ່ທະນາຄານຢ່າງຖືກຕ້ອງຕາມລະບຽບກົດໝາຍ;
- **ສະມາຄົມທີ່ບໍ່ມີຖານະນິຕິບຸກຄົນ** ແມ່ນສະມາຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມຕື່ນຕົວສະໝັກໃຈຂອງບຸກຄົນ ຫຼື ການຈັດຕັ້ງທີ່ມີເງື່ອນໄຂບໍ່ຄົບຖ້ວນ ຕາມວັກທີສອງຂອງມາດຕານີ້. ລັດຮັບຮູ້ ແລະ ສົ່ງເສີມໃຫ້ມີສະມາຄົມທີ່ບໍ່ມີຖານະນິຕິບຸກຄົນ ໂດຍມີນິຕິກໍາ ກໍານົດສະເພາະ.

ມາດຕາ 3. ການອະທິບາຍຄໍາສັບ

- **ສະມາຄົມ** ໃນດໍາລັດສະບັບນີ້ ໝາຍເຖິງສະຫະສະມາຄົມ, ສະຫະພັນ, ສະພາ, ສະໂມສອນ ຫຼື ມີຊື່ເອີ້ນອື່ນ ຊຶ່ງແມ່ນການຈັດຕັ້ງທາງສັງຄົມ ທີ່ມີສະມາຊິກ;
- **ບໍ່ຫວັງຜົນກໍາໄລ** ໝາຍເຖິງຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວຂອງສະມາຄົມພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນໍາມາແບ່ງປັນກັນ, ແຕ່ນໍາໄປໃຊ້ຈ່າຍ ຕາມຈຸດປະສົງທີ່ກໍານົດຢູ່ໃນກົດລະບຽບຂອງສະມາຄົມ.

ມາດຕາ 4. ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ນໍາໃຊ້ສະເພາະແຕ່ສໍາລັບສະມາຄົມທີ່ມີຖານະນິຕິບຸກຄົນເທົ່ານັ້ນ ແລະ ບໍ່ມີຜົນບັງຄັບ ສໍາລັບບັນດາອົງການຈັດຕັ້ງດັ່ງຕໍ່ໄປນີ້:

- ແນວລາວສ້າງຊາດ;
- ສະຫະພັນກໍາມະບານລາວ;
- ສະຫະພັນນັກຮົບເກົ່າແຫ່ງຊາດລາວ;
- ສະຫະພັນແມ່ຍິງລາວ;
- ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
- ສະມາຄົມມິດຕະພາບ ກັບ ປະເທດຕ່າງໆ;
- ອົງການສາສະໜາ;
- ກອງທຶນ;
- ມູນນິທິ.

ສຳລັບບັນດາອົງການຈັດຕັ້ງເຫຼົ່ານີ້, ສະມາຄົມທີ່ບໍ່ມີຖານະນິຕິບຸກຄົນ ແລະ ສະມາຄົມຂອງຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ມາເຄື່ອນໄຫວຢູ່ໃນ ສ.ປ.ປ. ລາວ ຈະມີລະບຽບການຕ່າງຫາກ.

**ມາດຕາ 5. ຫຼັກການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງ ສະມາຄົມ**

ສະມາຄົມ ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ຕົນຕົວສະໝັກໃຈເຂົ້າຮ່ວມ ຫຼື ອອກຈາກສະມາຄົມ ໂດຍບໍ່ມີຜູ້ໃດຈຳກັດ ຫຼື ບັງຄັບ;
2. ເຄື່ອນໄຫວເປັນປະຈຳ ຕາມກົດລະບຽບຂອງສະມາຄົມ;
3. ຄຸ້ມຄອງ ແລະ ຮັບຜິດຊອບດ້ວຍຕົນເອງຕໍ່ໜ້າກົດໝາຍທຸກການ ເຄື່ອນໄຫວຂອງສະມາຄົມ;
4. ກຸ້ມຕົນເອງທາງດ້ານການເງິນ;
5. ເຄື່ອນໄຫວບໍ່ຫວັງຜົນກຳໄລ;
6. ໂປ່ງໃສ, ເປີດເຜີຍ, ມີປະຊາທິປະໄຕ ແລະ ມີຄວາມສະເໝີພາບ.

**ມາດຕາ 6. ເງື່ອນໄຂທີ່ຈະເປັນສະມາຄົມ**

ສະມາຄົມໃດໜຶ່ງທີ່ຈະໄດ້ຮັບການສ້າງຕັ້ງຂຶ້ນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຈຸດປະສົງທີ່ບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງເຜົ່າຕ່າງໆ; ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ;
2. ມີຜູ້ລິເລີ່ມກໍ່ຕັ້ງສະມາຄົມທີ່ເປັນພົນລະເມືອງລາວ, ມີອາຍຸແຕ່ 18 ປີຂຶ້ນໄປ ແລະ ບໍ່ເປັນຄົນບ້າເສຍຈິດ;
3. ມີຄະນະຂົນຂວາຍສ້າງຕັ້ງສະມາຄົມຢ່າງໜ້ອຍ 03 ຄົນ ໂດຍແມ່ນຜູ້ລິເລີ່ມສ້າງຕັ້ງສະມາຄົມເປັນຜູ້ແຕ່ງຕັ້ງ ຊຶ່ງຢ່າງໜ້ອຍໜຶ່ງໃນສາມຂອງຄະນະຂົນຂວາຍຕ້ອງມີວິຊາສະເພາະໃນດ້ານໃດດ້ານໜຶ່ງທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະມາຄົມ;
4. ຊື່ຂອງສະມາຄົມທີ່ຈະສ້າງຕັ້ງຂຶ້ນ ບໍ່ຊ້ຳຊ້ອນກັບຊື່ຂອງສະມາຄົມອື່ນ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງກ່ອນແລ້ວ ໃນທ້ອງຖິ່ນດຽວກັນ;
5. ໄດ້ຮັບການອະນຸຍາດສ້າງຕັ້ງຈາກອົງການຈັດຕັ້ງຂອງລັດຕາມດຳລັດສະບັບນີ້;
6. ມີກົດລະບຽບ, ມີສຳນັກງານ ແລະ ມີຊັບສິນເພື່ອຮັບປະກັນບັນລຸຈຸດປະສົງຂອງສະມາຄົມທີ່ວາງໄວ້;
7. ມີຈຳນວນສະມາຊິກທີ່ໄດ້ລົງທະບຽນສະໝັກໃຈ ເຂົ້າຮ່ວມເຄື່ອນໄຫວ ໃນສະມາຄົມຢ່າງຄົບຖ້ວນຕາມກຳນົດຄື:
   - ສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ຕ້ອງມີສະມາຊິກຢ່າງໜ້ອຍ 25 ຄົນ;
   - ສະມາຄົມທີ່ເຄື່ອນໄຫວໃນຂອບເຂດພາຍໃນແຂວງ, ນະຄອນ ຕ້ອງມີສະມາຊິກຢ່າງໜ້ອຍ 15 ຄົນ;
   - ສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດສະເພາະພາຍໃນເມືອງ, ເທດສະບານ ຫຼື ບ້ານ ຕ້ອງມີສະມາຊິກຢ່າງໜ້ອຍ 10 ຄົນ.

ສຳລັບສະມາຄົມທີ່ເຄື່ອນໄຫວໃນຂົງເຂດ, ຂະແໜງ, ອາຊີບ ຫຼື ທ້ອງຖິ່ນທີ່ມີລັກສະນະພິເສດ, ຈຳນວນສະມາຊິກ ໃຫ້ພິຈາລະນາເປັນແຕ່ລະກໍລະນີ.

## ພາກທີ II
## ປະເພດ ແລະ ລະດັບສະມາຄົມ

### ມາດຕາ 7. ປະເພດສະມາຄົມ

ສະມາຄົມ ຢູ່ ສ.ປ.ປ. ລາວ ມີປະເພດຕ່າງໆ ດັ່ງນີ້:

1. ສະມາຄົມ ທີ່ມີລັກສະນະເສດຖະກິດ;
2. ສະມາຄົມ ທີ່ມີລັກສະນະວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ;
3. ສະມາຄົມ ທີ່ມີລັກສະນະສັງຄົມສົງເຄາະ;
4. ແລະ ອື່ນໆ.

### ມາດຕາ 8. ລະດັບສະມາຄົມ

ສະມາຄົມຖືກຈັດແບ່ງອອກເປັນ 03 ລະດັບດັ່ງນີ້:

1. ສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດ;
2. ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ;
3. ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ ຫຼື ບ້ານ.

### ມາດຕາ 9. ສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດ

ສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດ ແມ່ນສະມາຄົມ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງຂອງປະເທດ ທີ່ກວມເອົາຫຼາຍແຂວງ, ນະຄອນ.

### ມາດຕາ 10. ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ

ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ ແມ່ນສະມາຄົມທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະໃນຂອບເຂດພາຍໃນແຂວງ ຫຼື ນະຄອນໃດໜຶ່ງ.

### ມາດຕາ 11. ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ ຫຼື ບ້ານ

ສະມາຄົມເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ ຫຼື ບ້ານ ແມ່ນສະມາຄົມທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະຢູ່ແຕ່ໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ ຫຼື ບ້ານໃດໜຶ່ງເທົ່ານັ້ນ.

## ພາກທີ III
## ລະບຽບການ ແລະ ຂັ້ນຕອນການສ້າງຕັ້ງສະມາຄົມ

### ມາດຕາ 12. ລະບຽບ ແລະ ຂັ້ນຕອນການສະເໜີສ້າງຕັ້ງສະມາຄົມ

ການສ້າງຕັ້ງສະມາຄົມ ໃຫ້ປະຕິບັດຕາມລະບຽບການ ແລະ ຂັ້ນຕອນດັ່ງນີ້:

1. ເມື່ອຜູ້ລິເລີ່ມກໍ່ຕັ້ງສະມາຄົມໄດ້ແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມຂຶ້ນແລ້ວ ໃຫ້ແຈ້ງຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂໍ້ 1 ແລະ 50 ຂໍ້ 3 ຂອງດຳລັດສະບັບນີ້ ເພື່ອພິຈາລະນາ;
2. ຄະນະຂົນຂວາຍສ້າງຕັ້ງສະມາຄົມ ປະກອບສຳນວນເອກະສານໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດຢູ່ໃນມາດຕາ 13 ຂອງດຳລັດສະບັບນີ້ ແລ້ວຍື່ນ ຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເພື່ອອະນຸມັດ ບົນພື້ນຖານຄຳເຫັນຂອງກະຊວງ ຫຼື ຂະແໜງການທີ່ກ່ຽວຂ້ອງ;
3. ພາຍໃນ 30 ວັນ ນັບແຕ່ວັນໄດ້ຮັບສຳນວນເອກະສານສະເໜີຂໍສ້າງຕັ້ງສະມາຄົມ ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕ້ອງອອກໃບອະນຸຍາດຊົ່ວຄາວ ຫຼື ປະຕິເສດການສ້າງຕັ້ງສະມາຄົມ;
4. ເມື່ອໄດ້ຮັບໃບອະນຸຍາດຊົ່ວຄາວໃຫ້ສ້າງຕັ້ງສະມາຄົມແລ້ວ ຄະນະຂົນຂວາຍ ດັ່ງກ່າວກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ເພື່ອສ້າງຕັ້ງສະມາຄົມ;
5. ຄະນະຂົນຂວາຍສ້າງຕັ້ງສະມາຄົມຈະຖືກຍຸບເລີກໄປໃນຕົວ ພາຍຫຼັງກອງປະຊຸມໃຫຍ່ ຂອງສະມາຄົມເລືອກຕັ້ງໄດ້ຄະນະບໍລິຫານງານຂອງສະມາຄົມແລ້ວ;
6. ສະມາຄົມຈະໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ເມື່ອອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ກຳນົດຢູ່ໃນມາດຕາ 50 ຂໍ້ 1 ແລະ 50 ຂໍ້ 3 ຂອງດຳລັດສະບັບນີ້ ໄດ້ອອກຂໍ້ຕົກລົງຮັບຮອງເອົາກົດລະບຽບຂອງສະມາຄົມເປັນຕົ້ນໄປ.

**ມາດຕາ 13. ການປະກອບເອກະສານ ຂໍອະນຸມັດສ້າງຕັ້ງສະມາຄົມ**

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ປະກອບເອກະສານ ໃຫ້ຄົບຖ້ວນ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງສະມາຄົມ;
2. ຮ່າງກົດລະບຽບຂອງສະມາຄົມ;
3. ຊີວະປະຫວັດຫຍໍ້, ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ, ປະກາສະນີຍະບັດ ຂອງ ຄະນະຂົນຂວາຍສ້າງຕັ້ງສະມາຄົມ;
4. ບັນຊີລາຍຊື່ຂອງບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລົງທະບຽນສະໝັກໃຈເຂົ້າຮ່ວມສະມາຄົມ;
5. ເອກະສານຢັ້ງຢືນສຳນັກງານຂອງສະມາຄົມ.

**ມາດຕາ 14. ຊື່, ສຳນັກງານ, ສັນຍາລັກ ແລະ ຕາປະທັບຂອງສະມາຄົມ**

**1. ຊື່**

ຊື່ຂອງສະມາຄົມໃຫ້ເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກ ສະນະຫຍາບຄາຍ ແລະ ຖ້າມີຄວາມຈຳເປັນແປເປັນພາສາຕ່າງປະເທດກໍໄດ້.

**2. ສຳນັກງານ**

ສຳນັກງານຂອງສະມາຄົມ ຕ້ອງມີທີ່ຕັ້ງຢູ່ ສ.ປ.ປ. ລາວ ແລະ ມີໜັງສືຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າ ທີ່ຖືກຕ້ອງຕາມກົດໝາຍ.

**3. ສັນຍາລັກ**

ອະນຸຍາດໃຫ້ສະມາຄົມມີກາໝາຍສັນຍາລັກສະເພາະຂອງຕົນ.

4. **ຕາປະທັບ**

ສະມາຄົມມີຕາປະທັບເປັນຂອງຕົນເອງ ໂດຍແມ່ນອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 15. ກົດລະບຽບຂອງສະມາຄົມ**

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ຄົ້ນຄວ້າຮ່າງກົດລະບຽບ ຂອງສະມາຄົມໂດຍບໍ່ຂັດກັບແນວທາງແລະລະບຽບກົດໝາຍຂອງລັດ ເພື່ອສະເໜີຜ່ານໃນກອງປະຊຸມໃຫຍ່ສະມາຄົມແລ້ວຍື່ນຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງ ເພື່ອພິຈາລະນາຮັບຮອງເອົາ. ກົດລະບຽບຂອງສະມາຄົມມີເນື້ອໃນຕົ້ນຕໍດັ່ງນີ້:

1. ຊື່ຂອງສະມາຄົມ;
2. ສຳນັກງານບ່ອນເຮັດວຽກ;
3. ສັນຍາລັກ (ຖ້າມີ);
4. ຈຸດປະສົງ, ຂອບເຂດ ແລະ ຂົງເຂດວຽກງານ ທີ່ສະມາຄົມຈະເຄື່ອນໄຫວ;
5. ຫຼັກການກ່ຽວກັບການຈັດຕັ້ງແລະ ການເຄື່ອນໄຫວ ຂອງ ສະມາຄົມ;
6. ມາດຕະຖານ ແລະ ເງື່ອນໄຂ ຂອງ ແຕ່ລະປະເພດສະມາຊິກສະມາຄົມ;
7. ສິດ ແລະ ພັນທະຂອງແຕ່ລະປະເພດສະມາຊິກສະມາຄົມ;
8. ລະບຽບການກ່ຽວກັບການເຂົ້າເປັນສະມາຊິກ ແລະ ການຢຸດເຊົາການເປັນສະມາຊິກຂອງສະມາຄົມ;
9. ການຈັດຕັ້ງ ຫຼື ຜູ້ມີສິດອະນຸມັດຮັບເອົາສະມາຊິກ ຫຼື ປົດສະມາຊິກອອກຈາກສະມາຄົມ;
10. ໂຄງປະກອບການຈັດຕັ້ງຂອງສະມາຄົມ;
11. ໜ້າທີ່, ສິດ, ວິທີການເລືອກຕັ້ງ, ການແຕ່ງຕັ້ງ, ປົດຕຳແໜ່ງຄະນະບໍລິຫານງານ, ຄະນະກວດກາ, ເລຂາທິການ ແລະ ສະມາຊິກສະມາຄົມ;
12. ການເງິນ ແລະ ຊັບສິນຂອງສະມາຄົມ;
13. ລະບຽບການ ແລະ ຂັ້ນຕອນການໂຮມ, ການແຍກ ແລະ ການຍຸບເລີກສະມາຄົມ;
14. ການຍ້ອງຍໍ ແລະ ການປະຕິບັດວິໄນ;
15. ລະບຽບການ ແລະ ຂັ້ນຕອນການປັບປຸງ, ດັດແປງ ແລະ ເພີ່ມເຕີມກົດລະບຽບຂອງສະມາຄົມ;
16. ການຮ້ອງທຸກ ແລະ ລະບຽບການແກ້ໄຂຄຳຮ້ອງທຸກ;
17. ຜົນສັກສິດຂອງກົດລະບຽບສະມາຄົມ.

**ມາດຕາ 16. ກອງປະຊຸມໃຫຍ່ສ້າງຕັ້ງສະມາຄົມ**

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ກະກຽມ ແລະ ຈັດຕັ້ງກອງປະຊຸມໃຫຍ່ຂອງສະມາຄົມຂຶ້ນພາຍໃນ **90** ວັນ ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງສະມາຄົມ. ເນື້ອໃນຂອງກອງປະຊຸມໃຫຍ່ປະກອບມີ: ອ່ານຂໍ້ຕົກລົງອະນຸມັດສ້າງຕັ້ງສະມາຄົມ, ຜ່ານກົດລະບຽບສະມາຄົມ, ເລືອກຕັ້ງ

ຄະນະບໍລິຫານງານ ແລະ ຄະນະກວດກາສະມາຄົມ, ຜ່ານແຜນການເຄື່ອນໄຫວຂອງສະມາຄົມ ແລະ ຜ່ານມະຕິກອງປະຊຸມໃຫຍ່ສ້າງຕັ້ງສະມາຄົມ.

ພາຍໃນ **30** ວັນ ນັບແຕ່ວັນປິດກອງປະຊຸມໃຫຍ່, ຄະນະບໍລິຫານງານຂອງສະມາຄົມ ຕ້ອງສົ່ງບົດລາຍງານ ກ່ຽວກັບຜົນຂອງກອງປະຊຸມ, ບົດບັນທຶກການເລືອກຕັ້ງຄະນະບໍລິຫານງານ, ຄະນະກວດກາ, ຮ່າງກົດລະບຽບຂອງສະມາຄົມ, ແຜນການເຄື່ອນໄຫວ ແລະ ມະຕິຂອງກອງປະຊຸມໃຫຍ່ສ້າງຕັ້ງສະມາຄົມ ໄປຍັງອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ **50** ຂໍ້ **1** ແລະ **50** ຂໍ້ **3** ຂອງດຳລັດສະບັບນີ້ ເພື່ອຊາບ ແລະ ພິຈາລະນາ.

ພາຍໃນ **60** ວັນ ນັບແຕ່ວັນໄດ້ຮັບ "ຮ່າງ" ກົດລະບຽບຂອງສະມາຄົມ ອົງການທີ່ມີສິດອະນຸມັດສ້າງຕັ້ງຕ້ອງພິຈາລະນາຮັບຮອງ ຫຼື ບໍ່ຮັບຮອງເອົາກົດລະບຽບຂອງສະມາຄົມ. ໃນກໍລະນີທີ່ບໍ່ສາມາດຮັບຮອງເອົາໄດ້ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕ້ອງແຈ້ງເຫດຜົນຢ່າງຈະແຈ້ງ, ຄົບຖ້ວນ ແລະ ເປັນລາຍລັກອັກສອນ ຄືນໃຫ້ສະມາຄົມທີ່ກ່ຽວຂ້ອງ.

ກົດລະບຽບຂອງສະມາຄົມມີຜົນສັກສິດ ແລະ ນຳໃຊ້ຢ່າງເປັນທາງການ ນັບແຕ່ວັນ ທີ່ອົງການທີ່ມີສິດອະນຸມັດສ້າງຕັ້ງອອກຂໍ້ຕົກລົງຮັບຮອງເອົາເປັນຕົ້ນໄປ.

## ພາກທີ IV
## ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ພັນທະ ແລະ ຂໍ້ຫ້າມຂອງສະມາຄົມ

### ມາດຕາ 17. ທີ່ຕັ້ງ ແລະ ພາລະບົດບາດ

ສະມາຄົມແມ່ນການຈັດຕັ້ງສັງຄົມ, ມີພາລະບົດບາດເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງ ສະມາຊິກ ແລະ ຊ່ວຍເຫຼືອສັງຄົມ; ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ; ປະກອບສ່ວນສ້າງສາ, ພັດທະນາປະເທດຊາດ ແລະ ລຶບລ້າງຄວາມທຸກຍາກ.

### ມາດຕາ 18. ສິດ ແລະ ໜ້າທີ່ ຂອງ ສະມາຄົມ

ສະມາຄົມ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງ, ລະບຽບກົດໝາຍຂອງລັດ ແລະ ກົດລະບຽບຂອງຕົນ;
2. ໂຄສະນາເຜີຍແຜ່ ໃຫ້ກວ້າງຂວາງ, ທົ່ວເຖິງໃນສັງຄົມ ກ່ຽວກັບຈຸດປະສົງຂອງຕົນ;
3. ປົກປ້ອງສິດ ແລະ ຜົນປະໂຫຍດ ທີ່ຊອບທຳ ຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ;
4. ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກ ສະມາຄົມ, ກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້ດ້ານຕ່າງໆ ໃຫ້ແກ່ສະມາຊິກ;
5. ໃຫ້ຄຳປຶກສາ, ຄຳສະເໜີແນະ, ລາຍງານສ່ອງແສງ, ກວດສອບຄວາມຖືກຕ້ອງ, ທ່ຽງທຳກ່ຽວກັບບັນຫາຕ່າງໆ ທີ່ນອນຢູ່ໃນຂົງເຂດ ຫຼື ຂະແໜງການທີ່ສະມາຄົມ ເຄື່ອນໄຫວບົນພື້ນຖານລະບຽບກົດໝາຍ;
6. ດຳເນີນກິດຈະກຳທາງດ້ານເສດຖະກິດ ພາຍໃຕ້ລະບຽບກົດໝາຍ;
7. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸຍາດຂອງອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ບົນພື້ນຖານລະບຽບກົດໝາຍ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ແລະ ລະບຽບກົດໝາຍ.

**ມາດຕາ 19. ພັນທະຂອງສະມາຄົມ**

ສະມາຄົມ ມີພັນທະດັ່ງນີ້:

1. ເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
2. ລາຍງານປະຈຳປີ ໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຊາບກ່ຽວກັບສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແລະ ການໃຊ້ຈ່າຍການເງິນ ແລະ ງົບປະມານຂອງສະມາຄົມ;
3. ປະຕິບັດກົດໝາຍວ່າດ້ວຍການກວດສອບບັນຊີແຫ່ງລັດ ແລະ ລະບຽບການກ່ຽວກັບການຄຸ້ມຄອງບັນຊີ-ການເງິນຂອງສະມາຄົມຢ່າງເຂັ້ມງວດ;
4. ປະຕິບັດພັນທະອື່ນໆ ທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 20. ຂໍ້ຫ້າມສຳລັບສະມາຄົມ**

ຂໍ້ຫ້າມ ສຳລັບສະມາຄົມ ມີດັ່ງນີ້:

1. ຫ້າມສວຍໃຊ້ສິດເສລີພາບໃນການສ້າງຕັ້ງສະມາຄົມ ຫຼື ໃນນາມສະມາຄົມ ເພື່ອເຄື່ອນໄຫວຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍ;
2. ຫ້າມເຄື່ອນໄຫວທີ່ຈະເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;
3. ຫ້າມທຳລາຍຜົນປະໂຫຍດຂອງຊາດ, ຂອງລວມໝູ່ ແລະ ບຸກຄົນ;
4. ຫ້າມເຄື່ອນໄຫວທີ່ນຳໄປສູ່ການແບ່ງແຍກຄວາມສາມັກຄີພາຍໃນຊາດ, ພາຍໃນທ້ອງຖິ່ນ ແລະ ເຜົ່າຕ່າງໆ.

## ພາກທີ V

## ໂຄງປະກອບການຈັດຕັ້ງ

### ໝວດທີ 1

### ໂຄງປະກອບບຸກຄະລາກອນ

**ມາດຕາ 21. ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງສະມາຄົມ ປະກອບດ້ວຍ:

- ຄະນະບໍລິຫານງານ;
- ຄະນະກວດກາ;
- ເລຂາທິການ;
- ແລະ ບຸກຄະລາກອນຕຳແໜ່ງອື່ນໆ ທີ່ກຳນົດຢູ່ໃນກົດລະບຽບຂອງສະມາຄົມ.

## ໝວດທີ 2
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ຄະນະບໍລິຫານງານ

**ມາດຕາ 22. ພາລະບົດບາດ**

ຄະນະບໍລິຫານງານສະມາຄົມ ແມ່ນການຈັດຕັ້ງໜຶ່ງ ຊຶ່ງຖືກເລືອກຕັ້ງໂດຍກອງປະຊຸມໃຫຍ່ສະມາຄົມ, ມີພາລະບົດບາດຊີ້ນຳ ນຳພາທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສຳຄັນຂອງສະມາຄົມ ໃນລະຫວ່າງກາງ 02 ສະໄໝກອງປະຊຸມໃຫຍ່.

**ມາດຕາ 23. ສິດ ແລະ ໜ້າທີ່**

ຄະນະບໍລິຫານງານສະມາຄົມມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ກຳນົດມາດຕະການທີ່ຈຳເປັນ ເພື່ອປະຕິບັດມະຕິກອງປະຊຸມໃຫຍ່;
2. ພິຈາລະນາຕົກລົງແຜນການເຄື່ອນໄຫວ, ແຜນງົບປະມານປະຈຳປີຂອງສະມາຄົມ ແລະ ກຳນົດກ່ຽວກັບອັດຕາຄ່າທຳນຽມເຂົ້າຮ່ວມສະມາຄົມ, ເງິນບຳລຸງສະມາຄົມ ແລະ ລາຍຮັບ, ລາຍຈ່າຍອື່ນໆ ຂອງສະມາຄົມ;
3. ພິຈາລະນາຕົກລົງກ່ຽວກັບໂຄງປະກອບການຈັດຕັ້ງ, ການແຕ່ງຕັ້ງຫົວໜ້າ, ຮອງຫົວໜ້າຫົວໜ່ວຍການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບສະມາຄົມ;
4. ເລືອກຕັ້ງຄະນະປະຈຳ (ຖ້າຈຳເປັນ) ແລະ ຄະນະກວດກາຂອງສະມາຄົມ;
5. ເລືອກຕັ້ງ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ, ເລຂາທິການ, ກຳມະການຄະນະປະຈຳ (ຖ້າມີ), ຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າຄະນະກວດກາ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງຫົວໜ້າຫົວໜ່ວຍການຈັດຕັ້ງຕ່າງໆທີ່ຂຶ້ນກັບ ສະມາຄົມ;
6. ອຳນວຍ, ຄວບຄຸມການເຄື່ອນໄຫວຂອງຄະນະປະຈຳ ແລະ ການຈັດຕັ້ງຕ່າງໆ ທີ່ຂຶ້ນກັບສະມາຄົມ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

## ໝວດທີ 3
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ຄະນະກວດກາ

**ມາດຕາ 24. ພາລະບົດບາດ**

ຄະນະກວດກາ ແມ່ນການຈັດຕັ້ງໜຶ່ງ ຊຶ່ງຖືກເລືອກຕັ້ງໂດຍກອງປະຊຸມໃຫຍ່ຂອງສະມາຄົມ, ມີພາລະບົດບາດຊ່ວຍຄະນະບໍລິຫານງານສະມາຄົມ ກວດກາທຸກການເຄື່ອນໄຫວຂອງສະມາຄົມ ເພື່ອຮັບປະກັນຄວາມຖືກຕ້ອງ ຕາມກົດລະບຽບຂອງສະມາຄົມ ແລະ ລະບຽບກົດໝາຍຂອງລັດ.

**ມາດຕາ 25. ສິດ ແລະ ໜ້າທີ່**

ຄະນະກວດກາມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາໃນກໍລະນີທີ່ມີປະກົດການລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງສະມາຄົມ;

2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຂອງ ກອງປະຊຸມໃຫຍ່, ມະຕິກອງປະຊຸມ ຂອງ ຄະນະບໍລິຫານງານ, ມະຕິກອງປະຊຸມ ຂອງ ຄະນະປະຈຳສະມາຄົມ (ຖ້າມີ);
3. ກວດກາການຄຸ້ມຄອງ, ການໃຊ້ຈ່າຍການເງິນຂອງສະມາຄົມ;
4. ພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ຄຳສະເໜີ ຂອງ ສະມາຊິກສະມາຄົມ ຕາມຂອບເຂດສິດຂອງຕົນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ເລຂາທິການ

**ມາດຕາ 26. ພາລະບົດບາດ**

ເລຂາທິການສະມາຄົມ ແມ່ນຜູ້ຊ່ວຍວຽກ ປະທານຄະນະບໍລິຫານງານສະມາຄົມ ຊຶ່ງຖືກເລືອກຕັ້ງໂດຍຄະນະບໍລິຫານງານສະມາຄົມ, ມີພາລະບົດບາດບໍລິຫານ, ອຳນວຍ ຄວບຄຸມວຽກງານປະຈຳວັນຂອງສະມາຄົມ ແລະ ການຈັດຕັ້ງຕ່າງໆ ທີ່ຂຶ້ນກັບສະມາຄົມ. ນອກນີ້ ເລຂາທິການສະມາຄົມ ຍັງຈະຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງ ປະທານຄະນະບໍລິຫານງານຂອງສະມາຄົມ.

**ມາດຕາ 27. ສິດ ແລະ ໜ້າທີ່**

ເລຂາທິການສະມາຄົມມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມເອກະສານ, ເນື້ອໃນກອງປະຊຸມຄະນະບໍລິຫານງານ ຫຼື ຄະນະປະຈຳ (ຖ້າມີ);
2. ສະເໜີຄຳເຫັນ, ຄຳສະເໜີແນະ ຕໍ່ ປະທານ, ຮອງປະທານຄະນະບໍລິຫານງານ ສະມາຄົມກ່ຽວກັບບັນຫາຕ່າງໆ;
3. ກະກຽມບົດສະຫຼຸບປະຈຳເດືອນ, ງວດ, **06** ເດືອນ ແລະ ປະຈຳປີຂອງສະມາຄົມ ເພື່ອລາຍງານຕໍ່ຄະນະບໍລິຫານງານ ຫຼື ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ;
4. ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃນດ້ານຕ່າງໆ ທີ່ຈຳເປັນສຳລັບການເຄື່ອນໄຫວວຽກງານຂອງສະມາຄົມ, ຄະນະບໍລິຫານງານ, ປະທານ ແລະ ຮອງປະທານ ຄະນະບໍລິຫານງານສະມາຄົມ;
5. ພົວພັນ ແລະ ປະສານງານກັບສະມາຄົມອື່ນ, ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງພັກ, ລັດ ໃນນາມສະມາຄົມ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

**ມາດຕາ 28. ໂຄງປະກອບກົງຈັກ**

ຫ້ອງການເລຂາທິການເປັນກົງຈັກຊ່ວຍວຽກ ແລະ ເປັນອົງການ ປະຈຳການຂອງສະມາຄົມ, ມີພາລະບົດບາດຊ່ວຍຄະນະບໍລິຫານງານສະມາຄົມ ໃນການຄຸ້ມຄອງບໍລິຫານວຽກງານ, ອຳນວຍຄວາມສະດວກ ໃຫ້ແກ່ທຸກການເຄື່ອນໄຫວວຽກງານຂອງສະມາຄົມ.

## ພາກທີ VI

## ສະມາຊິກ ຂອງ ສະມາຄົມ

**ມາດຕາ 29. ສະມາຊິກສະມາຄົມ**

ສະມາຊິກສະມາຄົມ ປະກອບດ້ວຍ:

1. ສະມາຊິກສາມັນ;
2. ສະມາຊິກສະໜັບສະໜູນ;
3. ສະມາຊິກກິດຕິມະສັກ.

**ມາດຕາ 30. ສະມາຊິກສາມັນ**

ສະມາຊິກສາມັນ ແມ່ນການຈັດຕັ້ງ ຫຼື ພົນລະເມືອງລາວ ຜູ້ທີ່ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງສະມາຄົມ, ຕື່ນຕົວສະໝັກໃຈເຂົ້າຮ່ວມສະມາຄົມ ແລະ ມີມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບຂອງສະມາຄົມ.

ຂອບເຂດສິດ, ພັນທະຂອງສະມາຊິກສາມັນ, ການພິຈາລະນາຮັບຮອງເອົາ ຫຼື ການປົດສະມາຊິກສາມັນອອກຈາກສະມາຄົມ ໃຫ້ປະຕິບັດຕາມກົດລະບຽບຂອງສະມາຄົມ.

**ມາດຕາ 31. ສະມາຊິກສະໜັບສະໜູນ**

ສະມາຊິກສະໜັບສະໜູນ ແມ່ນການຈັດຕັ້ງ ຫຼື ພົນລະເມືອງລາວທີ່ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງສະມາຄົມ, ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມ, ປະກອບສ່ວນ, ສົມທົບນຳສະມາຄົມ ແຕ່ບໍ່ທັນມີມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບ ຂອງສະມາຄົມ ຫຼື ຍັງບໍ່ທັນມີຈຸດປະສົງຢາກເຂົ້າເປັນສະມາຊິກສາມັນເທື່ອ.

ສະມາຊິກສະໜັບສະໜູນ ມີສິດ ແລະ ພັນທະຄືກັນກັບສະມາຊິກສາມັນ ຍົກເວັ້ນສິດເລືອກຕັ້ງ, ສະໝັກຮັບເລືອກຕັ້ງເຂົ້າໃນຕຳແໜ່ງຄະນະບໍລິຫານງານ, ຄະນະກວດກາ, ເລຂາທິການ ແລະ ສິດລົງຄະແນນສຽງຕົກລົງກ່ຽວກັບບັນຫາຕ່າງໆ ຂອງສະມາຄົມ.

ການພິຈາລະນາຮັບເອົາ ຫຼື ປົດສະມາຊິກສະໜັບສະໜູນ ອອກຈາກສະມາຄົມ ໃຫ້ປະຕິບັດຕາມກົດລະບຽບຂອງສະມາຄົມ.

**ມາດຕາ 32. ສະມາຊິກກິດຕິມະສັກ**

ສະມາຊິກກິດຕິມະສັກ ແມ່ນຜູ້ຕາງໜ້າການຈັດຕັ້ງ ຫຼື ພົນລະເມືອງລາວ ຊຶ່ງເປັນຜູ້ທີ່ມີບົດບາດ, ເປັນຜູ້ຊົງຄຸນວຸດທິ, ເປັນຜູ້ທີ່ໄດ້ຮັບການເຊື່ອຖືໃນສັງຄົມ, ເຄີຍໄດ້ ປະກອບສ່ວນໃຫ້ແກ່ສະມາຄົມ ແລະ ສະມາຄົມ ໄດ້ເຊີນໃຫ້ເປັນສະມາຊິກກິດຕິມະສັກ.

**ມາດຕາ 33. ການໂຄສະນາ ແລະ ຂະຫຍາຍສະມາຊິກ**

ການໂຄສະນາ ແລະ ຂະຫຍາຍສະມາຊິກຂອງສະມາຄົມ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງສະມາຄົມ ແລະ ອົງການປົກຄອງທ້ອງຖິ່ນຊາບ.

## ພາກທີ VII

## ກອງປະຊຸມຂອງສະມາຄົມ

**ມາດຕາ 34. ກອງປະຊຸມ**

ກອງປະຊຸມຂອງສະມາຄົມ ປະກອບມີ:

1. ກອງປະຊຸມໃຫຍ່;
2. ກອງປະຊຸມໃຫຍ່ວິສາມັນ;
3. ກອງປະຊຸມ ຂອງ ຄະນະບໍລິຫານງານ.

**ມາດຕາ 35. ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການນໍາພາສູງສຸດຂອງສະມາຄົມ, ເປີດຂຶ້ນຕາມຮູບແບບກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ ຕາມກົດລະບຽບຂອງສະມາຄົມກໍານົດ.

ກອງປະຊຸມໃຫຍ່ຂອງສະມາຄົມສະໄໝໜຶ່ງເປີດຂຶ້ນ ຕາມການກໍານົດຂອງກົດລະບຽບຂອງສະມາຄົມ,ແຕ່ບໍ່ໃຫ້ເກີນຫ້າປີນັບແຕ່ກອງປະຊຸມໃຫຍ່ຄັ້ງກ່ອນສິ້ນສຸດລົງ. ໃນກໍລະນີທີ່ບໍ່ສາມາດເປີດກອງປະຊຸມໃຫຍ່ຂຶ້ນໄດ້ ປະທານຄະນະບໍລິຫານງານສະມາຄົມຕ້ອງເຮັດໜັງສືເຖິງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອອະທິບາຍເຫດຜົນ.

**ມາດຕາ 36. ກອງປະຊຸມໃຫຍ່ວິສາມັນ**

ກອງປະຊຸມໃຫຍ່ວິສາມັນຂອງສະມາຄົມ ເປີດຂຶ້ນຕາມການກໍານົດຂອງກົດລະບຽບສະມາຄົມ ຫຼື ເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສະມາຊິກສາມັນທັງໝົດ ຫຼື ມີສະມາຊິກໃນຄະນະບໍລິຫານງານຂອງສະມາຄົມຈໍານວນສອງສ່ວນສາມຂຶ້ນໄປ ສະເໜີຂໍເປີດກອງປະຊຸມໃຫຍ່ວິສາມັນ.

ຫຼັກການ ແລະ ຮູບແບບການລົງຄະແນນສຽງໃນກອງປະຊຸມໃຫ້ປະຕິບັດຕາມກົດລະບຽບຂອງສະມາຄົມ.

**ມາດຕາ 37. ກອງປະຊຸມຂອງຄະນະບໍລິຫານງານ**

ກອງປະຊຸມຂອງຄະນະບໍລິຫານງານເປີດຂຶ້ນ ຕາມການກໍານົດຂອງກົດລະບຽບຂອງສະມາຄົມ ແຕ່ຢ່າງໜ້ອຍຕ້ອງເປີດຂຶ້ນປີລະໜຶ່ງຄັ້ງ ເພື່ອສະຫຼຸບການເຄື່ອນໄຫວວຽກງານຂອງສະມາຄົມໃນປີຜ່ານມາ ແລະ ວາງທິດທາງແຜນການເຄື່ອນໄຫວໃນປີຕໍ່ໄປ.

**ມາດຕາ 38. ການແຈ້ງ ແລະ ການລາຍງານກ່ຽວກັບກອງປະຊຸມໃຫຍ່ຂອງສະມາຄົມ**

ກ່ອນເປີດກອງປະຊຸມໃຫຍ່ຂອງສະມາຄົມ ຄະນະບໍລິຫານງານຕ້ອງຂໍອະນຸມັດ ແລະ ແຈ້ງເປັນລາຍລັກອັກສອນ ກ່ຽວກັບເນື້ອໃນ ແລະ ບຸກຄະລາກອນຜູ້ທີ່ຈະເປັນປະທານ ຫຼື ຮອງປະທານຄະນະບໍລິຫານງານ ຂອງສະມາຄົມໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງຊາບລ່ວງໜ້າ 30 ວັນ ກ່ອນມື້ເປີດກອງປະຊຸມໃຫຍ່. ພາຍຫຼັງສິ້ນສຸດກອງປະຊຸມໃຫຍ່ຂອງຕົນແລ້ວ ໃຫ້ລາຍງານຜົນຂອງກອງປະຊຸມ ຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງ ຊ້າສຸດບໍ່ໃຫ້ເກີນ 30 ວັນ.

## ພາກທີ VIII
## ການໂຮມ, ການແຍກ, ການຍຸບເລີກສະມາຄົມ ແລະ ການສ້າງຕັ້ງສະຫະສະມາຄົມ

### ມາດຕາ 39. ການໂຮມ ແລະ ການແຍກສະມາຄົມ

ການໂຮມຫຼາຍສະມາຄົມເຂົ້າກັນເປັນສະມາຄົມດຽວ ຫຼື ການແຍກ ສະມາຄົມໜຶ່ງອອກເປັນຫຼາຍສະມາຄົມໃຫ້ປະຕິບັດຕາມກົດລະບຽບ ຂອງ ສະມາຄົມບົນພື້ນຖານຄວາມຕື່ນຕົວສະໝັກໃຈ ຂອງສະມາຄົມ, ສະມາຊິກ ສະມາຄົມ ແລະ ການເຫັນດີຈາກອົງການທີ່ມີສິດອະນຸມັດສ້າງຕັ້ງ.

### ມາດຕາ 40. ການຍຸບເລີກສະມາຄົມ

ສະມາຄົມໃດໜຶ່ງ ຈະຖືກຍຸບເລີກໃນກໍລະນີໃດໜຶ່ງດັ່ງນີ້:

1. ໝົດກຳນົດເວລາການເຄື່ອນໄຫວຕາມທີ່ກຳນົດໄວ້ຢູ່ໃນກົດລະບຽບຂອງສະມາຄົມ;
2. ມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນທັງໝົດຮຽກຮ້ອງໃຫ້ຍຸບເລີກ;
3. ສະມາຄົມ ໄດ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ຢູ່ໃນກົດລະບຽບຂອງຕົນແລ້ວ;
4. ລັດມີຂໍ້ຕົກລົງໃຫ້ຍຸບເລີກ ເນື່ອງຈາກບໍ່ໄດ້ເຄື່ອນໄຫວຕໍ່ເນື່ອງເປັນ ເວລາຢ່າງໜ້ອຍ 12 ເດືອນມາແລ້ວ, ໝົດກຳນົດເວລາເຄື່ອນໄຫວແລ້ວ ແຕ່ສະມາຄົມບໍ່ທັນ ສະໝັກໃຈຍຸບເລີກດ້ວຍຕົນເອງ ຫຼື ສະມາຄົມໄດ້ລະເມີດກົດໝາຍ ຫຼື ກົດລະບຽບ ຂອງສະມາຄົມ ຢ່າງຮ້າຍແຮງ.

ໜ້າທີ່ ແລະ ຂອບເຂດສິດຂອງສະມາຄົມທີ່ຖືກຍຸບເລີກແລ້ວ ໃຫ້ສິ້ນສຸດລົງ ນັບແຕ່ວັນທີ່ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຫຼື ອົງການປົກຄອງແຂວງ, ນະຄອນ ໄດ້ຖອນໃບອະນຸຍາດສ້າງຕັ້ງສະມາຄົມຄືນ.

### ມາດຕາ 41. ໜ້າທີ່ຂອງສະມາຄົມເມື່ອສະໝັກໃຈຍຸບເລີກສະມາຄົມ

ຄະນະບໍລິຫານງານຂອງສະມາຄົມ ກະກຽມ ແລະ ສົ່ງສຳນວນເອກະສານດັ່ງລຸ່ມນີ້ໄປຍັງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ (ສຳລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ) ຫຼື ສົ່ງໄປຍັງອົງການປົກຄອງແຂວງ, ນະຄອນ (ສຳລັບສະມາຄົມທີ່ເຄື່ອນໄຫວໃນຂອບເຂດພາຍໃນແຂວງ, ນະຄອນ, ເມືອງ ແລະ ເທດສະບານ):

1. ໃບຄຳຮ້ອງຂໍອະນຸຍາດຍຸບເລີກສະມາຄົມ;
2. ມະຕິກອງປະຊຸມ ຫຼື ບົດບັນທຶກກອງປະຊຸມຕົກລົງຍຸບເລີກສະມາຄົມ;
3. ບັນຊີຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ແລະ ເງິນຄັງທີ່ຍັງເຫຼືອ;
4. ແຜນການຊຳລະສະສາງແກ້ໄຂໜີ້ສິນ, ແກ້ໄຂຊັບສິນທີ່ຍັງເຫຼືອ.

### ມາດຕາ 42. ການສ້າງຕັ້ງສະຫະສະມາຄົມ

1. ສະມາຄົມຕ່າງໆທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງເປັນທາງການແລ້ວ ແລະ ເຄື່ອນໄຫວຢູ່ໃນຂົງເຂດ, ຂະແໜງການດຽວກັນ ຊຶ່ງມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນຳກັນ ສາມາດສ້າງຕັ້ງສະຫະສະມາຄົມຂຶ້ນໄດ້;
2. ການເຂົ້າຮ່ວມ ຫຼື ອອກຈາກສະຫະສະມາຄົມ ແມ່ນບົນພື້ນຖານຄວາມຕື່ນຕົວ ສະໝັກໃຈຂອງ ແຕ່ລະສະມາຄົມ ຕາມການກຳນົດຂອງກົດລະບຽບສະມາຄົມ.

3. ການໂຮມ, ການແຍກ, ການຍຸບເລີກສະຫະສະມາຄົມ ໃຫ້ປະຕິບັດຕາມມາດຕາ **39, 40** ແລະ **41** ຂອງດຳລັດສະບັບນີ້.

**ມາດຕາ 43. ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ**

ສະມາຄົມ ອາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນ ໂດຍໄດ້ຮັບການເຫັນດີ ຈາກອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ພາກທີ IX

## ການເງິນ ແລະ ຊັບສິນຂອງສະມາຄົມ

### ໝວດທີ 1

### ການເງິນຂອງສະມາຄົມ

**ມາດຕາ 44. ແຫຼ່ງລາຍຮັບຂອງສະມາຄົມ**

ລາຍຮັບຂອງສະມາຄົມໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ເງິນບຳລຸງຂອງສະມາຊິກ;
2. ການຊ່ວຍເຫຼືອຂອງບຸກຄົນ ຫຼື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດ ໝາຍ;
3. ລາຍໄດ້ຈາກການເຄື່ອນໄຫວຂອງສະມາຄົມ;
4. ແຫຼ່ງລາຍຮັບອື່ນໆ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 45. ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງ ສະມາຄົມ**

ການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງສະມາຄົມ ໃຫ້ປະຕິບັດຕາມກົດລະບຽບຂອງສະ ມາຄົມ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

ລວມຍອດລາຍຈ່າຍບໍລິຫານປົກກະຕິ ບໍ່ໃຫ້ເກີນ **25%** ຂອງແຜນລາຍຈ່າຍປະຈຳປີ ຂອງ ສະມາຄົມ.

### ໝວດທີ 2

### ຊັບສິນຂອງສະມາຄົມ

**ມາດຕາ 46. ຊັບສິນຂອງສະມາຄົມ**

ຊັບສິນຂອງສະມາຄົມ ແມ່ນຕຶກ, ອາຄານ, ທີ່ດິນ, ພາຫະນະ, ອຸປະກອນຮັບໃຊ້ ແລະ ຊັບສິນອື່ນໆ ທີ່ໄດ້ມາຈາກການປະກອບສ່ວນຂອງສະມາຊິກ, ການຊື້, ການບໍລິຈາກ, ການຊ່ວຍ ເຫຼືອລ້າຂອງບຸກຄົນ, ການຈັດຕັ້ງ, ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້.

**ມາດຕາ 47. ການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງສະມາຄົມ**

– ລັດຮັບຮູ້ ແລະ ປົກປ້ອງຊັບສິນທີ່ຖືກຕ້ອງຕາມກົດໝາຍ ຂອງສະມາຄົມ;
– ການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງສະມາຄົມ ໃຫ້ປະຕິບັດຕາມການກຳນົດຂອງ ກົດລະ ບຽບຂອງສະມາຄົມ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

## ພາກທີ X
## ການເສີມຂະຫຍາຍບົດບາດ ແລະ ນະໂຍບາຍຂອງລັດຕໍ່ສະມາຄົມ

**ມາດຕາ 48. ການສົ່ງເສີມ ແລະ ເສີມຂະຫຍາຍບົດບາດ ຂອງ ສະມາຄົມ**

ລັດສົ່ງເສີມ ແລະ ເສີມຂະຫຍາຍບົດບາດຂອງສະມາຄົມດັ່ງນີ້:

1. ຮັບປະກັນສິດເສລີພາບຂອງພົນລະເມືອງໃນການສ້າງຕັ້ງສະມາຄົມ ທີ່ບໍ່ຂັດກັບລະບຽບກົດໝາຍ;
2. ສ້າງເງື່ອນໄຂໃຫ້ສະມາຄົມເຄື່ອນໄຫວ ແລະ ປົກປ້ອງສິດຜົນປະໂຫຍດທີ່ຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ;
3. ສົ່ງເສີມໃຫ້ສະມາຄົມເຄື່ອນໄຫວຢ່າງເປີດເຜີຍ, ໂປ່ງໃສ ແລະ ພັດທະນາຢ່າງໝັ້ນຄົງ;
4. ສົ່ງເສີມບົດບາດຂອງສະມາຄົມທີ່ເຄື່ອນໄຫວໃນຂົງເຂດສຶກສາ, ສາທາລະນະສຸກ, ວິທະຍາສາດ-ເຕັກນິກ, ກິລາກາຍຍະກຳ ແລະ ສິ່ງແວດລ້ອມ;
5. ອອກກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອໃຫ້ສະມາຄົມມີບ່ອນອີງໃນການເຄື່ອນໄຫວ ແລະ ເພື່ອຊຸກຍູ້ສົ່ງເສີມໃຫ້ສະມາຄົມມີການພັດທະນາຢ່າງໝັ້ນຄົງ.

**ມາດຕາ 49. ນະໂຍບາຍຂອງລັດ ຕໍ່ ສະມາຄົມ**

ລັດມີນະໂຍບາຍຕໍ່ສະມາຄົມດັ່ງນີ້:

1. ມອບໂອນວຽກງານການບໍລິການສາທາລະນະໃຫ້ສະມາຄົມນັບມື້ຫຼາຍຂຶ້ນ, ທັງມີມາດຕະການລະອຽດ ເພື່ອຊຸກຍູ້ສົ່ງເສີມໃຫ້ສະມາຄົມ ເຮັດການບໍລິການສາທາລະນະ, ຊ່ວຍເຫຼືອສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;
2. ອະນຸຍາດໃຫ້ຮັບການບໍລິຈາກເງິນ, ຊັບສິນຕ່າງໆ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານລະບຽບກົດໝາຍ;
3. ອະນຸຍາດຫຼຸດຜ່ອນ ຫຼື ຍົກເວັ້ນພາສີ, ອາກອນ, ຄ່າທຳນຽມຕ່າງໆໃຫ້ແກ່ສະມາຄົມ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
4. ໃຫ້ຄວາມສະດວກ, ຄຳແນະນຳ ແລະ ການຊ່ວຍເຫຼືອ ໂດຍຜ່ານບັນດາກະຊວງ, ອົງການ, ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອໃຫ້ສະມາຄົມມີການເຄື່ອນໄຫວຢ່າງມີປະສິດທິຜົນ, ສອດຄ່ອງກັບແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ.

## ພາກທີ XI
## ການຄຸ້ມຄອງ ແລະ ກວດກາສະມາຄົມ

### ໝວດທີ 1
### ການຄຸ້ມຄອງສະມາຄົມ

**ມາດຕາ 50. ອົງການຄຸ້ມຄອງສະມາຄົມ**

ລັດຖະບານເປັນຜູ້ຄຸ້ມຄອງສະມາຄົມຢ່າງລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການດັ່ງຕໍ່ໄປນີ້ ເປັນຜູ້ຄຸ້ມຄອງຊ່ວຍ:

1. ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ;
2. ກະຊວງ, ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ;
3. ອົງການປົກຄອງແຂວງ, ນະຄອນ.

**ມາດຕາ 51. ສິດ ແລະ ໜ້າທີ່ ຂອງ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ**

ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຮ່າງ ແລະ ສະເໜີຕໍ່ຂັ້ນເທິງ ພິຈາລະນາປະກາດໃຊ້ບັນດານະໂຍບາຍ ແລະ ກົດໝາຍກ່ຽວກັບສະມາຄົມ;
2. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບສະມາຄົມ;
3. ຄົ້ນຄວ້າ, ພິຈາລະນາອະນຸມັດການສ້າງຕັ້ງ, ຮັບຮອງເອົາການໂຮມ, ການແຍກ ຫຼື ການຍຸບເລີກສະມາຄົມທີ່ກຳນົດໃນມາດຕາ **9** ຂອງດຳລັດສະບັບນີ້;
4. ຕິດຕາມ, ກວດກາ, ກວດການ ການຈັດຕັ້ງ, ການເຄື່ອນໄຫວຂອງສະມາຄົມ ທີ່ກຳ ນົດໃນມາດຕາ **9** ຂອງດຳລັດສະບັບນີ້;
5. ແນະນຳບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ຂັ້ນເມືອງກ່ຽວກັບວຽກງານການຄຸ້ມຄອງ, ກວດກາການເຄື່ອນໄຫວຂອງສະມາຄົມ;
6. ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕາມຂອບເຂດສິດຂອງຕົນ.

**ມາດຕາ 52. ສິດ ແລະ ໜ້າທີ່ ຂອງ ກະຊວງ, ຂະແໜງການ**

ກະຊວງ, ຂະແໜງການ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນ ຕໍ່ການສະເໜີຂໍອະນຸມັດສ້າງຕັ້ງ, ໂຮມ, ແຍກ ແລະ ຍຸບເລີກສະມາຄົມທີ່ພົວພັນກັບຂົງເຂດ, ຂະແໜງການທີ່ຕົນເອງຮັບຜິດຊອບຄຸ້ມຄອງ;
2. ໂຄສະນາ ເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງກັບວຽກງານຂອງຕົນ ໃຫ້ສະມາຄົມ;
3. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງສະມາຄົມ ເພື່ອເຮັດໃຫ້ສະມາຄົມ ເຄື່ອນໄຫວຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງສະມາຄົມ;
4. ສະເໜີອົງການທີ່ມີສິດອະນຸມັດສ້າງຕັ້ງ ຫຼື ລັດຖະບານ ເພື່ອໃຫ້ການຍ້ອງຍໍສະມາຄົມທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມທີ່ພົວພັນກັບຂະແໜງການຕົນ.

**ມາດຕາ 53. ສິດ ແລະ ໜ້າທີ່ ຂອງ ອົງການປົກຄອງແຂວງ, ນະຄອນ**

ອົງການປົກຄອງແຂວງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າອະນຸມັດການສ້າງຕັ້ງ, ຮັບຮອງເອົາ ການໂຮມ, ການແຍກ ຫຼື ການຍຸບເລີກ ສະມາຄົມທີ່ກຳນົດໄວ້ຢູ່ໃນມາດຕາ 10 ແລະ 11 ຂອງດຳລັດສະບັບນີ້;
2. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບສະມາຄົມ;
3. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງສະມາຄົມ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງສະມາຄົມ;
4. ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕາມຂອບເຂດສິດຂອງຕົນ;
5. ໃຫ້ການຍ້ອງຍໍ ຫຼື ສະເໜີອົງການທີ່ມີສິດອຳນາດຂອງລັດ ໃຫ້ການຍ້ອງຍໍສະມາຄົມທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ ທີ່ພົວພັນກັບທ້ອງຖິ່ນຂອງຕົນ.

**ມາດຕາ 54. ການປະສານງານ**

1. ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ພົວພັນປະສານງານກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງກ່ອນອະນຸມັດສ້າງຕັ້ງ, ຮັບຮອງການໂຮມ, ການແຍກ ແລະ ການຍຸບເລີກສະມາຄົມ ທີ່ກຳນົດໃນມາດຕາ 9 ຂອງດຳລັດສະບັບນີ້;
2. ກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແຈ້ງສະພາບການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂົງເຂດ, ຂະແໜງການຂອງຕົນເອງ ໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນຊາບ;
3. ອົງການປົກຄອງແຂວງ, ນະຄອນ ພົວພັນປະສານງານກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງຢູ່ຂັ້ນແຂວງ ກ່ອນອະນຸມັດສ້າງຕັ້ງ, ຮັບຮອງການໂຮມ, ການແຍກ ແລະ ການຍຸບເລີກສະມາຄົມທີ່ກຳນົດໃນມາດຕາ **10** ແລະ **11** ຂອງດຳລັດສະບັບນີ້;
4. ພະແນກການທີ່ກ່ຽວຂ້ອງ ແຈ້ງສະພາບການເຄື່ອນໄຫວຂອງສະມາຄົມທີ່ເຄື່ອນໄຫວໃນຂົງເຂດວຽກງານຂອງຕົນເອງ ໃຫ້ອົງການປົກຄອງທ້ອງຖິ່ນຊາບ.

## ໝວດທີ 2

## ການກວດກາສະມາຄົມ

**ມາດຕາ 55. ອົງການກວດກາສະມາຄົມ**

ອົງການທີ່ມີສິດກວດກາສະມາຄົມ ປະກອບມີ:

1. ອົງການຄຸ້ມຄອງສະມາຄົມ ຕາມມາດຕາ 50 ຂອງດຳລັດສະບັບນີ້;
2. ອົງການກວດສອບບັນຊີ;
3. ອົງການກວດສອບແຫ່ງລັດ.

**ມາດຕາ 56. ການກວດກາສະມາຄົມ**

ອົງການກວດກາສະມາຄົມ ມີໜ້າທີ່ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ ຕາມຂອບເຂດສິດຂອງຕົນດັ່ງນີ້:

1. ກວດກາປະຫວັດຫຍໍ້ຂອງຜູ້ລິເລີ່ມ, ຄະນະຂົນຂວາຍສ້າງຕັ້ງ ແລະ ປະທານຄະນະບໍລິຫານງານສະມາຄົມ;
2. ກວດກາຈຸດປະສົງຂອງສະມາຄົມທີ່ໄດ້ລະບຸໄວ້ໃນກົດລະບຽບຂອງສະມາຄົມ;
3. ກວດກາບົດລາຍງານປະຈໍາປີ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ;
4. ກວດກາບົດລາຍງານປະຈໍາປີ ກ່ຽວກັບລາຍຮັບ-ລາຍຈ່າຍການເງິນຂອງສະມາຄົມ;
5. ກວດກາປະກົດການລະເມີດກົດລະບຽບຂອງສະມາຄົມ ແລະ ລະບຽບກົດໝາຍ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57. ນະໂຍບາຍຕໍ່ຜູ້ມີຜົນງານ**

ສະມາຄົມ ຫຼື ສະມາຊິກສະມາຄົມທີ່ມີຜົນງານດີເດັ່ນ ໃນການປະກອບ ສ່ວນສ້າງຄຸນປະໂຫຍດ ແລະ ຄຸນງາມຄວາມດີໃຫ້ແກ່ສະມາຄົມ ແລະ ປະເທດຊາດຈະໄດ້ຮັບການຍ້ອງຍໍສັນລະເສີນດ້ວຍຮູບການຕ່າງໆ ຕາມກົດລະບຽບຂອງສະມາຄົມ ແລະ ຕາມນະໂຍບາຍຂອງລັດ.

**ມາດຕາ 58. ມາດຕະການຕໍ່ຜູ້ລະເມີດ**

ສະມາຄົມ ຫຼື ສະມາຊິກສະມາຄົມ ຫາກໄດ້ລະເມີດດໍາລັດສະບັບນີ້ ຫຼື ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງກັບສະມາຄົມຈະຖືກກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ດໍາເນີນຄະດີຕາມສະຖານໜັກ ຫຼື ເບົາ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 59. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມພາຍໃນປະເທດຈົ່ງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ຢ່າງເຂັ້ມງວດ.

ກະຊວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສໍານັກງານນາຍົກລັດຖະມົນຕີ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດ ແລະ ໃຫ້ອອກບົດແນະນໍາລະອຽດຕື່ມ ເພື່ອຜັນຂະຫຍາຍເນື້ອໃນດໍາລັດສະບັບນີ້.

**ມາດຕາ 60.** **ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ເພື່ອໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ, ອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາສະມາຄົມໄດ້ມີເວລາກະກຽມເງື່ອນໄຂຕ່າງໆ ໃນການຈັດຕັ້ງປະຕິບັດ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ບັນດາສະມາຄົມທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວມາກ່ອນການໃຊ້ດຳລັດສະບັບນີ້ໃຫ້ປະກອບສຳນວນເອກະສານຄົບຖ້ວນຕາມກຳນົດໄວ້ໃນມາດຕາ **13** ຂອງດຳລັດສະບັບນີ້ແລ້ວຍື່ນຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງສະມາຄົມ ຕາມທີ່ກຳນົດໄວ້ໃນ ມາດຕາ **50 ຂໍ້ 1** ແລະ **50 ຂໍ້ 3** ຂອງດຳລັດສະບັບນີ້ ເພື່ອຂໍອະນຸມັດສ້າງຕັ້ງຄືນໃໝ່ພາຍໃນກຳນົດເວລາເກົ້າສິບວັນ ນັບແຕ່ວັນດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ